**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

## ບົດບັນທຶກກອງປະຊຸມ

ກອງປະຊຸມຄະນະກຳມະການບໍລິຫານງານກອງທຶນໂລກ (ຄບກທລ) ແລະ ຄະນະກຳມະການຕິດຕາມກວດກາ ໄດ້ຈັດຂຶ້ນຮ່ວມກັນ ເພື່ອປຶກສາຫາລືບັນຫາຕ່າງໆກ່ຽວກັບການຫັນຫາກະກຽມການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຮອບໃໝ່ 2018-2020 ຂອງກອງທຶນໂລກ. ກອງປະຊຸມດັ່ງກ່າວນີ້ ໂດຍການເປັນປະທານຂອງ ທ່ານ ຮສ ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ ແລະ ທ່ານ ນາງ ປາຕຣິເຊຍ ເຄໂຮ ຜູ້ຈັດການອາວຸໂສ ຂອງກອງທຶນໂລກ ກໍ່ໄດ້ເຂົ້າຮ່ວມ ແລະ ໄດ້ປຶກສາຫາລືຫຼາຍບັນຫາກ່ຽວກັບການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຂອງກອງທຶນໂລກນຳຄະນະກຳມະການ.

I. ວັນເວລາ: ວັນສຸກ, ທີ 23 ກຸມພາ 2018, ເວລາ 10:00 ເຖິງ 12:00.

II. ສະຖານທີ່: ຫ້ອງປະຊຸມທີ່ຊັ້ນ 3, ກະຊວງສາທາລະນະສຸກ.

III. ຜູ້ເຂົ້າຮ່ວມ:

1. ຄະນະກຳມະການບໍລິຫານງານກອງທຶນໂລກ ຈຳນວນ 3 ທ່ານ;
2. ຄະນະກຳມະການຕິດຕາມກວດກາ ຈຳນວນ 8 ທ່ານ;
3. ຜູ້ເຂົ້າຮ່ວມຈາກພາກສ່ວນຕ່າງໆ ຈຳນວນ 18 ທ່ານ;
4. ກອງເລຂາຄະນະກຳມະການປະສານງານກອງທຶນໂລກ ຈຳນວນ 4 ທ່ານ.

   ລວມທັງໝົດ 33 ທ່ານ.

IV. ວາລະກອງປະຊຸມ:

1. ສະພາບການຫັນຫາກະກຽມຫ້ອງການຄຸ້ມຄອງໂຄງການກອງທຶນໂລກສຳລັບເງິນຊ່ວຍເຫຼືອຮອບໃໝ່ຂອງແຜນງານຕ້ານພະຍາດເອດ (HIV) ແລະ ວັນນະໂລກ (TB):
   - ການບໍລິຫານຄຸ້ມຄອງ, ການປະຕິບັດງານ ແລະ ພາລະບົດບາດ;
   - ການໄຫຼວຽນຂອງເງິນຊ່ວຍເຫຼືອ;
   - ບັນດາ ສິ່ງທ້າທາຍ ແລະ ໂອກາດໃນການຫັນຫາກະກຽມຫ້ອງການຄຸ້ມຄອງໂຄງການກອງທຶນໂລກໃໝ່.
2. ເງິນຊ່ວຍເຫຼືອຂອງແຜນງານ HIV ແລະ TB;

3. ໜ້າວຽກທີ່ຈະຕ້ອງໄດ້ປະຕິບັດໃນການປິດໂຄງການຊ່ວຍເຫຼືອຂອງຮອບຜ່ານມາ ສຳລັບ 2015-2017 ຂອງແຜນງານຕ້ານພະຍາດເອດ (HIV), ວັນນະໂຣກ (TB), ໄຂ້ຍຸງ (Malaria) ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ (HSS):
   - ການລາຍງານຜົນຂອງການຈັດຕັ້ງປະຕິບັດ ແລະ ຄ່າໃຊ້ຈ່າຍ ຮອດວັນທີ 31 ທັນວາ 2017;
   - ເງິນສົດທີ່ໃຊ້ບໍ່ໝົດ;
   - ການລົງທະບຽນຊັບສິນຂອງໂຄງການ.
4. ການລິເລີ່ມໃນໄລຍະຂ້າມຜ່ານ ແລະ ຄວາມຍືນຍົງ:
   - ການປະເມີນຄວາມກຽມພ້ອມໃນໄລຍະຂ້າມຜ່ານ;
   - ການວາງແຜນໃນໄລຍະຂ້າມຜ່ານ;
   - ການເຊື່ອມສານການວາງແຜນລະຫວ່າງແຜນງານ HIV ແລະ TB.
5. ການສະເໜີຊື່ຜູ້ສະໝັກເປັນສະມາຊິກຂອງຄະນະກຳມະການບໍລິຫານງານກອງທຶນໂລກ ສຳລັບວາລະ 2018-2020 (ກຳນົດສົ່ງພາຍໃນວັນທີ 26 ກຸມພາ 2018).

V. ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບເນື້ອໃນທີ່ໄດ້ປຶກສາຫາລື:

1. **ສະພາບການທ້າທາຍການກຽມຫ້ອງການຄຸ້ມຄອງໂຄງການກອງທຶນໂລກສຳລັບເງິນຊ່ວຍເຫຼືອຮອບໃໝ່ຂອງແຜນງານ HIV ແລະ TB:**
   - **ການບໍລິຫານຄຸ້ມຄອງ, ການປະຕິບັດງານ ແລະ ພາລະບົດບາດ:**
     - ➢ ໃຫ້ທາງກະຊວງສາທາລະນະສຸກສົ່ງບົດລາຍງານການການຄັດເລືອກ ແລະ ໜັງສືແຕ່ງຕັ້ງຫົວໜ້າຫ້ອງການຄຸ້ມຄອງໂຄງການກອງທຶນໂລກ ໃຫ້ທາງກອງທຶນໂລກ;
     - ➢ ການຕໍ່ສັນຍາຂອງຫົວໜ້າຫ້ອງການຄຸ້ມຄອງໂຄງການກອງທຶນໂລກໃນປີຕໍ່ໄປ (ຫຼັງຈາກ 1 ປີ) ແມ່ນຂຶ້ນກັບການປະຕິບັດໜ້າທີ່ວຽກງານຂອງຜູ້ກ່ຽວ ຊຶ່ງຈະໄດ້ເຮັດການປະເມີນໃນທ້າຍປີ 2018;
     - ➢ ຄະນະຊີ້ນຳຫ້ອງການຄຸ້ມຄອງໂຄງການກອງທຶນໂລກ ໄດ້ສະເໜີໃຫ້ຊ່ຽວຊານດ້ານໄຂ້ຍຸງ (Malaria) ແລະ ຂໍ້ມູນຂ່າວສານລະບົບສາທາລະນະສຸກ (DHIS2) ຂອງອົງການອານາໄມໂລກ (WHO) ເຂົ້າຮ່ວມກອງປະຊຸມ (ກອງປະຊຸມປະຈຳເດືອນ ແລະ ໄຕມາດ) ຂອງຄະນະຊີ້ນຳໂຄງການ ຢ່າງເປັນປົກກະຕິ;
     - ➢ ກົມແຜນການ ແລະ ການຮ່ວມມືສາກົນ (DPIC) ຈະຄົ້ນຄວ້າເບິ່ງຕື່ມກ່ຽວກັບການປ່ຽນແປງດ້ານໂຄງສ້າງຂອງຫ້ອງການຄຸ້ມຄອງໂຄງການກອງທຶນໂລກ (PMU) ເພື່ອສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງໃຫ້ແກ່ຫ້ອງການດັ່ງກ່າວນີ້.
   - **ການໄຫຼວຽນຂອງເງິນຊ່ວຍເຫຼືອ:**
     - ➢ ຮ່າງເອກະສານຂອງກົນໄກການໄຫຼວຽນເງິນຊ່ວຍເຫຼືອທີ່ໄດ້ນຳສະເໜີໄປແລ້ວນັ້ນຈະຕ້ອງປະກອບດ້ວຍບັນດາຄຳຄິດເຫັນຂອງກອງທຶນໂລກ ແລະ ສະບັບສຸດທ້າຍ ຈະຕ້ອງໄດ້ຖືກຮັບຮອງໂດຍທ່ານຮອງລັດຖະມົນຕີກະຊວງສາທາລະນະສຸກ.
   - ບັນດາ ສິ່ງທ້າທາຍ ແລະ ໂອກາດການທ້າທາຍການກຽມຫ້ອງການຄຸ້ມຄອງໂຄງການກອງທຶນໂລກໃໝ່:
     - ➢ ກຳນົດໜ້າທີ່ຮັບຜິດຊອບໃຫ້ຊັດເຈນແກ່ຫົວໜ້າຫ້ອງການຄຸ້ມຄອງໂຄງການກອງທຶນໂລກ, ຜູ້ຈັດການດ້ານການເງິນ ແລະ ພະນັກງານຝ່າຍຈັດຊື້;
     - ➢ ຈະຕ້ອງໄດ້ກຳນົດໜ້າວຽກຢ່າງລະອຽດລະຫວ່າງ ຫ້ອງການຄຸ້ມຄອງໂຄງການກອງທຶນໂລກຂອງກະຊວງສາທາລະນະສຸກ (MOH PMU) ແລະ ຜູ້ໄດ້ຮັບທຶນຕົ້ນຕໍຢູ່ເອັນນອບຂອງໄຂ້ຍຸງພາກພື້ນ (RAI-PR UNOPS);
     - ➢ MOH-PR PMU ເປັນຜູ້ຕິດຕາມກວດກາຜູ້ໄດ້ຮັບເງິນຊ່ວຍເຫຼືອຫຍ່ອຍທັງໝົດ;

- ຫ້ອງການ MOH PMU ຈະຕ້ອງໄດ້ຮີບດຳເນີນການໃຫ້ສຳເລັດ ເຊັ່ນ: ສັນຍາການສະໜອງເງິນຊ່ວຍເຫຼືອໃຫ້ SRs ທັງໝົດ; ການປະເມີນບັນດາຜູ້ໄດ້ຮັບທຶນຫຍ່ອຍ (SRs); ການສ້າງຄວາມສາມາດ ໃຫ້ແກ່ບັນດາພະນັກງານການເງິນ ແລະ ພະນັກງານຕິດຕາມ & ປະເມີນຜົນ ຂອງ PMU, SRs ແລະ ຜູ້ໄດ້ຮັບທຶນຫຍ່ອຍຕໍ່ຈາກຜູ້ໄດ້ຮັບທຶນຫຍ່ອຍ (SSRs);
- ການນຳໃຊ້ລະບົບບັນຊີ ACCPAC ເພື່ອເຮັດບົດລາຍງານ ແລະ ຈັດກອງປະຊຸມເພື່ອແນະນຳວິທີການຈັດຕັ້ງປະຕິບັດໂຄງການ ໃຫ້ແກ່ຜູ້ຈັດຕັ້ງປະຕິບັດເງິນຊ່ວຍເຫຼືອຮອບໃໝ່ຂອງແຜນງານ HIV ແລະ TB;
- RAI-PR UNOPS ຈະຊ່ວຍວຽກ PMU ເຊັ່ນ: ດ້ານການຄຸ້ມຄອງ, ວິຊາການດ້ານການເງິນ, ການສ້າງຄູ່ມື, ບົດແນະນຳ, ຂັ້ນຕອນການປະຕິບັດງານ, ເຄື່ອງມືຕ່າງໆ ແລະ ສະໜອງການຝຶກອົບຮົມໃຫ້ແກ່ພະນັກງານຂອງ PMU;
- ກອງທຶນຊ່ວຍເຫຼືອຂອງຝຣັ່ງ (FEI) ຈະສະໜອງທີ່ປຶກສາດ້ານການເງິນໃນເດືອນສິງຫາ 2018 ທີ່ຈະມາເຖິງນີ້. ດັ່ງນັ້ນ MOH PMU ຈະຕ້ອງໄດ້ປະສານງານກັບ RAI-PR UNOPS ເພື່ອກຳນົດບັນດາໜ້າວຽກດ້ານການເງິນຂອງທີ່ປຶກສາທີ່ຈະຕ້ອງໄດ້ເຮັດ ແລະ ດັດແກ້ພາລະບົດບາດແລະໜ້າທີ່ (TORs) ຂອງທີ່ປຶກສາດັ່ງກ່າວນີ້;

2. **ເງິນຊ່ວຍເຫຼືອເພີ່ມເຕີມຂອງກອງທຶນໂລກທີ່ມີສຳລັບ ສປປ ລາວ:**
   - ເງິນຊ່ວຍເຫຼືອຂອງແຜນງານ TB ຂອງພາກພື້ນ (ສຳລັບປະຊາກອນເຄື່ອນຍ້າຍ): ຈະມີທີມງານທີ່ປຶກສາມາຊ່ວຍວຽກໃນເດືອນມີນາ 2018 ແລະ ສະເໜີໃຫ້ສູນວັນນະໂຣກ (NTC) ເຊື້ອເຊີນພາກສ່ວນທີ່ກ່ຽວຂ້ອງທັງໝົດເຂົ້າມາມີສ່ວນຮ່ວມ;
   - ເງິນຊ່ວຍເຫຼືອ HIV ຂອງພາກພື້ນ ສຳລັບປະຊາກອນເປົ້າໝາຍ, ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ການໂຄສະນາຂົນຂວາຍ: ຈະຕ້ອງໄດ້ດຳເນີນການຂໍທຶນພາຍໃນປີ 2018 ແລະ ກອງທຶນໂລກຈະເປັນຜູ້ຄັດເລືອກເອົາຜູ້ໄດ້ຮັບທຶນຕົ້ນຕໍຂອງພາກພື້ນ;
   - ຕໍ່ເງິນຊ່ວຍເຫຼືອດັ່ງກ່າວນີ້ ທາງກອງທຶນໂລກຈະໄດ້ມີການສົນທະນາປຶກສາຫາລືພາຍໃນກັນກ່ອນ ແລ້ວ ຈະລາຍງານໃຫ້ຊາບຕື່ມ ແລະ ສະເໜີໃຫ້ຕົວແທນຈາກ ສປປ ລາວ ທີ່ເປັນສະມາຊິກສຳຮອງຂອງພາກພື້ນປາຊີຟິກຕາເວັນຕົກ (WPR) ຍົກບັນຫານີ້ຂຶ້ນໃນກອງປະຊຸມຄະນະກຳມະການບໍລິຫານງານກອງທຶນໂລກ ໃນເດືອນພຶດສະພາ ທີ່ຈະມາເຖິງນີ້.

3. **ໜ້າວຽກທີ່ຈະຕ້ອງໄດ້ປະຕິບັດໃນການປິດໂຄງການຊ່ວຍເຫຼືອຂອງຮອບຜ່ານມາສຳລັບ 2015-2017 ຂອງແຜນງານ HIV, TB, Malaria ແລະ HSS:**
   - **ການລາຍງານຜົນຂອງການຈັດຕັ້ງປະຕິບັດ ແລະ ຄ່າໃຊ້ຈ່າຍ ຮອດວັນທີ 31 ທັນວາ 2017:**
     - ຈະຕ້ອງໄດ້ສົ່ງບົດລາຍງານຂອງແຜນງານ ແລະ ການເງິນ (PUDR) ພາຍໃນວັນທີ 28 ກຸມພາ 2018;
     - ບົດລາຍງານການເງິນປະຈຳປີ (FAR): ໃຫ້ປັບປຸງລາຍການຊັບສິນ ແລະ ສະເໜີຕໍ່ກອງທຶນໂລກ ເພື່ອໂອນຊັບສິນຂອງ Malaria ແລະ HSS (ລວມທັງພາຫະນະ ແລະ ຄອມພິວເຕີ້ຂອງຫ້ອງການຄຸ້ມຄອງໂຄງການກອງທຶນໂລກຂອງກົມແຜນການແລະການຮ່ວມມືສາກົນ (DPIC PMU));
     - ກອງທຶນໂລກຕ້ອງການງົບປະມານທີ່ໄດ້ດັດແກ້ສຳລັບການປິດ (ລວມທັງຜົນການກວດສອບ) ຂອງແຜນງານ Malaria ແລະ HSS;
     - ພັນທະສຳລັບການບໍລິການ/ ສິນຄ້າຕ່າງໆ ທີ່ໄດ້ປະຕິບັດກ່ອນວັນທີ 31 ທັນວາ 2017 ແມ່ນສາມາດຈ່າຍຈາກຮ່ວງເງິນຊ່ວຍເຫຼືອໃນຮອບຜ່ານມາ (NFM) ແລະ ສ່ວນການບໍລິການອື່ນໆທີ່ໄດ້ປະຕິບັດແລ້ວໃນປີ 2018 ແມ່ນຈະຕ້ອງໄດ້ຈ່າຍຈາກເງິນຊ່ວຍເຫຼືອຮອບໃໝ່;

- ເງິນສົດທີ່ໃຊ້ຈ່າຍບໍ່ໝົດ ຈະຕ້ອງໄດ້ສົ່ງຄືນກອງທຶນໂລກ ຫຼື ຫັກຈຳນວນເງິນດັ່ງກ່າວນີ້ອອກຈາກການຂໍເບີກຈ່າຍເງິນຮອບຕໍ່ໄປ;
- ການປັບປຸງໜ້າວຽກດ້ານການຄຸ້ມຄອງທີ່ຈະຕ້ອງໄດ້ແກ້ໄຂ: ການຫຼຸດຜ່ອນຄວາມສ່ຽງຕາມທີ່ໄດ້ກຳນົດໂດຍທີ່ປຶກສາດ້ານວິຊາການຂອງລຸກຊຳບວກ (Luxembourg); ການຮັບປະກັນຄວາມສ່ຽງດ້ານການເງິນ (ຕາມການເຫັນດີຈາກຫ້ອງການ PR ປີ 2016); ຄວາມຄືບໜ້າຕໍ່ບັນດາຄຳແນະນຳຈາກການປະເມີນຂີດຄວາມສາມາດ ທີ່ໄດ້ສະເໜີໃນເດືອນກັນຍາ 2017

4. **ການລິເລີ່ມໃນໄລຍະຂ້າມຜ່ານ ແລະ ຄວາມຍືນຍົງ:**
   - ໃຫ້ສູນຕ້ານເອດ (CHAS) ຮັບລົງມືຈັດຕັ້ງປະຕິບັດວຽກງານຮ່ວມກັບແຜນງານ TB ແລະ ພາກສ່ວນກ່ຽວຂ້ອງທັງໝົດ ໂດຍຈະມີທີ່ປຶກສາດ້ານວິຊາການຈາກກອງທຶນໂລກມາຊ່ວຍ;
   - ທີ່ປຶກຈຳນວນສອງທ່ານດັ່ງກ່າວນີ້ ຈະມາ ສປປ ລາວ ໃນລະຫວ່າງວັນທີ 26 ມີນາ ຫາ 4 ເມສາ 2018 ເພື່ອຊ່ວຍໜ້າວຽກ ຄື: ການປະເມີນຄວາມພ້ອມໃນໄລຍະຂ້າມຜ່ານ; ການວາງແຜນ & ການກຳນົດແຜນງານໃນໄລຍະຂ້າມຜ່ານ ແລະ ການເຊື່ອມສານແຜນງານລະຫວ່າງແຜນງານ HIV ແລະ TB.

5. **ການສະເໜີຊື່ຜູ້ສະໝັກເປັນຄະນະກຳມະການປະຈຳຂອງຄະນະກຳມະການບໍລິຫານງານກອງທຶນໂລກ ສຳລັບວາລະ 2018-2020 (ກຳນົດສົ່ງພາຍໃນວັນທີ 26 ກຸມພາ 2018):**
   - ກອງເລຂາ ໄດ້ແຈ້ງການທາງອີເມວຫາສະມາຊິກຄະນະກຳມະການປະສານງານກອງທຶນໂລກທັງໝົດແລ້ວ ແລະມາຮອດປະຈຸບັນນີ້ ຍັງບໍ່ໄດ້ມີການສະເໜີຜູ້ສະໝັກເທື່ອ;
   - ຖ້າ ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງຄະນະດັ່ງກ່າວນີ້ ຈະເປັນໂອກາດດີ ສຳລັບ ສປປ ລາວ ທີ່ຈະໄດ້ນຳເອົາຂໍ້ມູນ ແລະ ຄຳຄິດເຫັນຕ່າງໆ ເຂົ້າໄປແລກປ່ຽນກັບບັນດາສະມາຊິກຂອງຄະນະກຳມະການດັ່ງກ່າວ.

ກອງປະຊຸມໄດ້ດຳເນີນໄປເປັນເວລາສອງຊົ່ວໂມງ ແລະ ໄດ້ສິ້ນສຸດລົງໃນເວລາ 12:00 ໃນຕອນທ່ຽງຂອງວັນທີ 23 ກຸມພາ 2018.

ນະຄອນຫຼວງວຽງຈັນ, ວັນທີ 2/3/2018

**ປະທານກອງປະຊຸມ**

ທ່ານ ຮສ. ດຣ. ພູທອນ ເມືອງປາກ
ຮອງລັດຖະມົນຕີກະຊວງສາທາລະນະສຸກ
ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ທຸກອນ ທະລັງສີ
ກອງເລຂາຄະນະກຳມະການປະສານງານກອງທຶນໂລກ